ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4285 /ກປ

ນະຄອນຫຼວງວຽງຈັນ, ວັນທີ 16 OCT 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຊີ້ນ ສະບັບເລກທີ 516/ລບ, ລົງວັນທີ 23 ກັນຍາ 2020;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 3478/ກລປ, ລົງວັນທີ 17 ສິງຫາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງ ສະບັບເລກທີ 3043 /ຫກ, ລົງວັນທີ 11 ກັນຍາ 2023.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ເພື່ອເຮັດໃຫ້ການດຳເນີນງານການຜະລິດ ຖືກຕ້ອງຕາມການປະຕິບັດງານການຜະລິດທີ່ດີ ແນໃສ່ຮັບປະກັນໃຫ້ຜະລິດຕະພັນສັດຂັ້ນຕົ້ນມີຄຸນນະພາບ, ສະອາດ, ປອດໄພ ແລະ ເໝາະສົມສຳລັບການບໍລິໂພກ ສາມາດຈຳໜ່າຍໄດ້ທັງພາຍໃນ ແລະ ສົ່ງອອກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ ຂອງຊາດໃຫ້ຂະຫຍາຍຕົວ.

### ມາດຕາ 2 ການຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

ການຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ແມ່ນຂະບວນການຄວບຄຸມ ກ່ຽວກັບ ການຈັດຕັ້ງການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນຂອງພາກລັດ ແລະ ເອກະຊົນ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ. ການຄຸ້ມຄອງດັ່ງກ່າວລວມທັງການ ກໍ່ສ້າງໂຮງງານ, ປະກອບເຄື່ອງມື, ບຸກຄະລາກອນ, ດຳເນີນງານ, ບັນຈຸ, ຫຸ້ມຫໍ່, ເກັບຮັກສາ ແລະ ຈຳໜ່າຍຜະລິດຕະພັນຂອງໂຮງງານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນສັດຂັ້ນຕົ້ນ** ໝາຍເຖິງ ຜະລິດຕະພັນສັດທີ່ຍັງດິບ ແລະ ບໍ່ທັນໄດ້ຜ່ານການປຸງແຕ່ງ ເປັນອາຫານສຳເລັດຮູບ;
2. **ການແປຮູບຜະລິດຕະພັນສັດຂັ້ນຕົ້ນ** ໝາຍເຖິງ ຂະບວນການປ່ຽນຮູບຜະລິດຕະພັນສັດ ທີ່ຍັງດິບ ໃຫ້ກາຍເປັນວັດຖຸດິບ ເພື່ອນຳໄປປຸງແຕ່ງ ເປັນອາຫານຂອງຄົນ ເປັນຕົ້ນ ການ ຕັດແຕ່ງ, ຈັດປະເພດ, ຫຸ້ມຫໍ່ຊີ້ນ, ເຄື່ອງໃນ, ໄຂ່ ແລະ ນ້ຳນົມດິບ ດ້ວຍການແຊ່ເຢັນ, ແຊ່ແຂງ ແລະ ການເກັບຮັກສາ ໄວ້ໃນສະພາບສຸມຍາກາດ;
3. **ວັດຖຸດິບ** ໝາຍເຖິງ ຊາກ ແລະ ຊິ້ນສ່ວນຂອງສັດ ທີ່ລ້ຽງໄວ້ເພື່ອບໍລິໂພກ ລວມທັງ ສານປຸງແຕ່ງ ລົດ, ສີ, ກິ່ນ ຫຼື ສານອື່ນ ທີ່ໃຊ້ເຂົ້າໃນການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
4. **ການຜະລິດ** ໝາຍເຖິງ ຂະບວນການ, ຂັ້ນຕອນການປະຕິບັດທີ່ກ່ຽວຂ້ອງກັບການຜະລິດ ເປັນຕົ້ນ: ການຕັດ, ບົດ, ປະສົມ, ປຸງແຕ່ງ, ບັນຈຸ, ຫຸ້ມຫໍ່, ຕິດສະຫຼາກ ລວມທັງການແນະນຳການ ນຳໃຊ້, ທຳຄວາມສະອາດ, ເກັບຮັກສາ ແລະ ການກວດກາຄຸນນະພາບ;
5. **ຊຸດຜະລິດ** ໝາຍເຖິງ ຈຳນວນຂອງຜະລິດຕະພັນໃດໜຶ່ງ ທີ່ໄດ້ຜ່ານຂະບວນການຜະລິດຄົບວົງຈອນ ຊຶ່ງປັດໄຈສຳຄັນຂອງຊຸດຜະລິດນັ້ນ ແມ່ນມີຄຸນລັກສະນະດຽວກັນ;
6. **ການປະຕິບັດງານການຜະລິດທີ່ດີ** ໝາຍເຖິງ ພາກສ່ວນໜຶ່ງຂອງລະບົບຄວບຄຸມຄຸນນະພາບ ຊຶ່ງຜູ້ດຳເນີນການຜະລິດ ຕ້ອງໄດ້ນຳໃຊ້ ແລະ ປະຕິບັດຢ່າງເຂັ້ມງວດ;
7. **ລະຫັດຂອງຊຸດຜະລິດ** ໝາຍເຖິງ ຕົວເລກ ຫຼື ຕົວອັກສອນ ຊຶ່ງເປັນຕົວແທນຢັ້ງຢືນຊຸດຜະລິດນັ້ນໆ ເພື່ອຕິດຕາມ ແລະ ກວດກາ.

**ມາດຕາ 4 ຫຼັກການ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນບົນພື້ນຖານຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບສັດ, ຜູ້ບໍລິໂພກ ແລະ ສິ່ງແວດລ້ອມ;
4. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
5. ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ກ່ຽວກັບ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

**ມາດຕາ 6 ປະເພດຂອງໂຮງງານ**

ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

**ປະເພດ 1:** ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ສຳລັບສົ່ງອອກ ຊຶ່ງແມ່ນ ກົມລ້ຽງສັດ ແລະ ການປະມົງ ຄຸ້ມຄອງ;

**ປະເພດ 2:** ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ສຳລັບບໍລິໂພກພາຍໃນ ຊຶ່ງແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຄຸ້ມຄອງ.

**ມາດຕາ 7 ການຂໍອະນຸມັດສ້າງຕັ້ງໂຮງງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຈະສ້າງຕັ້ງໂຮງງານ ຕ້ອງປະກອບເອກະສານ ແລະ ຍື່ນຄໍາຮ້ອງ ຕໍ່ ກະຊວງກະສິກໍາ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕາມລະບຽບການ.

**ມາດຕາ 8 ເງື່ອນໄຂຂອງຜູ້ຂໍອະນຸຍາດ ສ້າງຕັ້ງໂຮງງານ**

ຜູ້ທີ່ຈະຂໍອະນຸຍາດສ້າງຕັ້ງໂຮງງານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນພົນລະເມືອງສັນຊາດລາວ ຫຼື ຕ່າງປະເທດ ທີ່ບັນລຸນິຕິພາວະ ຊຶ່ງເປັນບຸກຄົນທີ່ສາມາດປະກອບອາຊີບໂດຍຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
2. ຕ້ອງມີນັກວິຊາການດົ້ນຕໍ ທີ່ເປັນນັກປຸງແຕ່ງ ສັນຊາດລາວ ຫຼື ຕ່າງປະເທດ ທີ່ມີໃບປະກາສະນິຍະບັດ ແລະ ໃບຢັ້ງຢືນການປະກອບວິຊາຊີບ ຊຶ່ງໄດ້ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງ ໃນການປຸງແຕ່ງ;
3. ບໍ່ແມ່ນຜູ້ທີ່ ຢູ່ໃນໄລຍະຖືກດໍາເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດ ທາງດ້ານວິຊາຊີບການປຸງແຕ່ງ.

**ມາດຕາ 9 ເອກະສານຂໍອະນຸມັດສ້າງຕັ້ງໂຮງງານ**

ເອກະສານຂໍອະນຸມັດສ້າງຕັ້ງໂຮງງານ ປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງ ກໍານົດ;
2. ສໍາເນົາ ບັດປະຈໍາຕົວ ຫຼື ປຶ້ມສໍາມະໂນຄົວ ແລະ/ຫຼື ສໍາເນົາໜັງສືເດີນທາງ (ຖ້າເປັນຄົນຕ່າງປະເທດ);
3. ສໍາເນົາ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ;
4. ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດສຶກສາຄວາມເປັນໄປໄດ້;
5. ໃບຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າ ທີ່ດິນ;
6. ໃບອະນຸຍາດປະກອບອາຊີບ ຢູ່ ສປປ ລາວ (ຖ້າເປັນຄົນຕ່າງປະເທດ);
7. ໃບຢັ້ງຢືນສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
8. ແຜນວາດທີ່ຕັ້ງ ແລະ ແຜນວາດພາຍໃນ ຂອງໂຮງງານ;
9. ໃບຢັ້ງຢືນແຈ້ງໂທດ;
10. ເອກະສານອື່ນທີ່ຈໍາເປັນ ຕາມການກໍານົດຂອງກົມລ້ຽງສັດ ແລະ ການປະມົງ.

**ມາດຕາ 10 ການກວດກາກ່ອນອອກໃບອະນຸມັດສ້າງຕັ້ງໂຮງງານ**

ການກວດກາກ່ອນອອກໃບອະນຸມັດສ້າງຕັ້ງໂຮງງານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການກວດກາໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ປະເພດ 1 ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ, ສໍາລັບ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ປະເພດ 2 ມອບໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນໃຈກາງໃນການແຕ່ງຕັ້ງຄະນະກໍາມະການກວດກາສະເພາະກິດ ໂດຍໃຫ້ປະກອບດ້ວຍ: ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ, ໜ່ວຍງານລ້ຽງສັດ ແລະ ການປະມົງ ຂັ້ນເມືອງ, ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ ພ້ອມທັງອົງການປົກຄອງບ້ານ ບ່ອນທີ່ຈະສ້າງຕັ້ງໂຮງງານ;
2. ດໍາເນີນການກວດກາເອກະສານ;
3. ລົງກວດກາສະຖານທີ່ຕົວຈິງ ຮ່ວມກັບ ພາກສ່ວນ ຫຼື ຂະແໜງການທີ່ກ່ຽວຂ້ອງຂອງທ້ອງຖິ່ນ;
4. ສ້າງບົດບັນທຶກ ແລະ ລາຍງານຜົນການກວດກາ ເປັນລາຍລັກອັກສອນ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຊາບ ພາຍໃນ ສາມວັນ ລັດຖະການ;
5. ພາຍຫຼັງໄດ້ຮັບບົດລາຍງານຈາກຄະນະກໍາມະການແລ້ວ ໃຫ້ກົມລ້ຽງສັດ ແລະ ການປະມົງ ລາຍງານຕໍ່ກະຊວງກະສິກໍາ ແລະ ປ່າໄມ້, ສໍາລັບ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ໃຫ້ລາຍງານຫາອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາ.

**ມາດຕາ 11 ການພິຈາລະນາ ອອກອະນຸມັດສ້າງຕັ້ງໂຮງງານ**

ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ພິຈາລະນາອະນຸມັດສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ພາຍໃນ ສິບວັນ ລັດຖະການ ນັບແຕ່ມື້ໄດ້ຮັບບົດລາຍງານ ຈາກ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ໃນກໍລະນີ ບໍ່ສາມາດພິຈາລະນາ ອອກອະນຸມັດສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຂໍອະນຸຍາດ ຊາບ.

**ມາດຕາ 12 ການອະນຸມັດໃຫ້ລົງມືກໍ່ສ້າງໂຮງງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸມັດສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນຂັ້ນຕົ້ນ ຈາກ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ແລ້ວ ໃຫ້ດຳເນີນການກໍ່ສ້າງຕາມແບບທີ່ໄດ້ຮັບຮອງ ຈາກ ຂະແໜງການທີ່ກ່ຽວຂ້ອງ ພາຍໃນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບໃບອະນຸມັດກໍ່ສ້າງ.

ຖ້າຫາກບໍ່ສາມາດລົງມືກໍ່ສ້າງໄດ້ ໃຫ້ແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຊາບ.

**ມາດຕາ 13 ການລາຍງານຄວາມຄືບໜ້າຂອງການກໍ່ສ້າງໂຮງງານ**

ຜູ້ໄດ້ຮັບອະນຸມັດກໍ່ສ້າງໂຮງງານ ຕ້ອງແຈ້ງໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ ເພື່ອຈັດຕັ້ງຄະນະລົງກວດກາ ແລະ ສ້າງບົດລາຍງານຮ່ວມກັນ ຢ່າງໜ້ອຍ ສາມຄັ້ງ ດັ່ງນີ້:

- ຄັ້ງທີໜຶ່ງ ເມື່ອການກໍ່ສ້າງ ສຳເລັດ ສາມສິບ ສ່ວນຮ້ອຍ;
- ຄັ້ງທີສອງ ເມື່ອການກໍ່ສ້າງ ສຳເລັດ ຫົກສິບ ສ່ວນຮ້ອຍ;
- ຄັ້ງທີສາມ ເມື່ອການກໍ່ສ້າງ ສຳເລັດ ຮ້ອຍສ່ວນຮ້ອຍ.

## ໝວດທີ 3
## ການດຳເນີນການຜະລິດ ຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

**ມາດຕາ 14 ການຂໍອະນຸຍາດດຳເນີນການຜະລິດ**

ພາຍຫຼັງສ້າງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ສຳເລັດແລ້ວ ກ່ອນຈະດຳເນີນການຜະລິດ ຜູ້ຜະລິດຕ້ອງຂໍໃບອະນຸຍາດດຳເນີນການຜະລິດ ຈາກ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ.

**ມາດຕາ 15 ເງື່ອນໄຂການຂໍອະນຸຍາດດຳເນີນການຜະລິດ**

ການດຳເນີນການຜະລິດ ໄດ້ກໍ່ຕໍ່ເມື່ອ ສຳເລັດການກໍ່ສ້າງໂຮງງານ ໂດຍສົມບູນ ເປັນຕົ້ນ ສຳເລັດການກໍ່ສ້າງອາຄານ, ຕິດຕັ້ງເຄື່ອງຈັກ ແລະ ລະບົບປ້ອງກັນຄວາມປອດໄພ, ສິ່ງອຳນວຍຄວາມສະດວກດ້ານສຸຂານາໄມ ມີລະບົບກຳຈັດ ແລະ ບຳບັດ ສິ່ງເສດເຫຼືອ ແລະ ມີນລະພິດພາຍໃນໂຮງງານ ໃຫ້ຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ.

**ມາດຕາ 16 ການປະກອບເອກະສານ ຂໍອະນຸຍາດດຳເນີນການຜະລິດ**

ການສະເໜີຂໍໃບອະນຸຍາດດຳເນີນການຜະລິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ ພ້ອມຮູບຖ່າຍ ຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ໃບ (ຮູບຖ່າຍຕ້ອງບໍ່ເກີນ ສາມເດືອນ);
2. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
3. ລາຍການເຄື່ອງຈັກທັງໝົດໃນໂຮງງານ;
4. ແຜນການເຄື່ອນໄຫວປະຈຳປີ;
5. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ.

**ມາດຕາ 17 ການກວດກາ ແລະ ປະເມີນໂຮງງານ ກ່ອນອອກອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນໃຈກາງແຕ່ງຕັ້ງ ຄະນະວິຊາການກວດກາ ເພື່ອລົງກວດກາໂຮງງານ ພ້ອມທັງເຮັດບົດບັນທຶກການກວດກາ ແລະ ລາຍງານ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພາຍໃນ ຫ້າວັນ ລັດຖະການ.

ໃນກໍລະນີ ພົບຜູ້ປະກອບການ ປະຕິບັດບໍ່ສອດຄ່ອງກັບມາດຕະຖານເຕັກນິກ ຄະນະວິຊາການກວດກາ ຕ້ອງໃຫ້ຄຳແນະນຳ ເພື່ອປັບປຸງ ແລະ ແກ້ໄຂ ພາຍໃນເວລາທີ່ກຳນົດ ພ້ອມທັງເຮັດບົດບັນທຶກການກວດກາ ແລະ ລາຍງານ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ ໂດຍດ່ວນ. ໃນກໍລະນີ ຜູ້ປະກອບການບໍ່ສາມາດປັບປຸງ ແລະ ແກ້ໄຂ ທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ ລ່ວງໜ້າ ກ່ອນມື້ສິ້ນສຸດຂອງກຳນົດເວລາ ທີ່ຄະນະວິຊາການກວດກາ ແນະນຳ. ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງ ແລະ ແກ້ໄຂ ຕາມການແນະນຳໃນບົດບັນທຶກການກວດກາແລ້ວ ໃຫ້ສະເໜີຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແຕ່ງຕັ້ງຄະນະວິຊາການກວດກາ ລົງກວດກາຄືນ ເພື່ອເຮັດບົດບັນທຶກການກວດກາ ແລະ ລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ພິຈາລະນາ.

**ມາດຕາ 18 ການພິຈາລະນາອອກໃບອະນຸຍາດດຳເນີນການຜະລິດ**

ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ພິຈາລະນາອອກໃບອະນຸຍາດດຳເນີນການຜະລິດ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບບົດລາຍງານ ຈາກ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນການຜະລິດ ກະຊວງກະສິກຳສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ເຈົ້າຂອງໂຮງງານ ຊາບ.

**ມາດຕາ 19 ການນຳໃຊ້ໃບອະນຸຍາດດຳເນີນການຜະລິດ**

ໃບອະນຸຍາດດຳເນີນການຜະລິດ ມີອາຍຸການນຳໃຊ້ ສາມປີ ນັບແຕ່ວັນອອກໃບອະນຸຍາດເປັນຕົ້ນໄປ. ໃບອະນຸຍາດດຳເນີນການຜະລິດ ສາມາດນຳໃຊ້ເປັນເອກະສານອ້າງອີງ ສຳລັບການຈຳໜ່າຍຜະລິດຕະພັນສັດຂັ້ນຕົ້ນຂອງຕົນ ລວມທັງ ສາມາດນຳໃຊ້ສຳລັບການນຳເຂົ້າວັດຖຸດິບ ແລະ ອຸປະກອນ ເພື່ອນຳມາຂະຫຍາຍການກໍ່ສ້າງ ແລະ ດຳເນີນການຜະລິດ ແຕ່ບໍ່ສາມາດນຳໃຊ້ສຳລັບການຈຳໜ່າຍຜະລິດຕະພັນສັດທີ່ບໍ່ແມ່ນຂອງຕົນ.

**ມາດຕາ 20 ການຕໍ່ອາຍຸໃບອະນຸຍາດດຳເນີນການຜະລິດ**

ກ່ອນໃບອະນຸຍາດຈະໝົດອາຍຸ ສາມສິບວັນ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງຍື່ນຄຳຮ້ອງເພື່ອຂໍຕໍ່ ນຳອົງການທີ່ອອກໃບອະນຸຍາດ ຕາມແບບພິມທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ. ການພິຈາລະນາ ຕໍ່ ຫຼື ບໍ່ຕໍ່ ໃບອະນຸຍາດດຳເນີນການຜະລິດ ພາຍໃນ ສິບຫ້າວັນ ນັບແຕ່ວັນໄດ້ຮັບໃບຄຳຮ້ອງ.

**ມາດຕາ 21 ການໂຈະໃບອະນຸຍາດ ດຳເນີນການຜະລິດ**

ການດຳເນີນການຜະລິດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ບໍ່ປະຕິບັດຕາມການແຈ້ງເຕືອນ ກ່ຽວກັບ ການປັບປຸງ ການປະຕິບັດຕາມເງື່ອນໄຂ, ມາດຕະຖານເຕັກນິກ ແລະ ຄຸນນະພາບຂອງຜະລິດຕະພັນສັດຂັ້ນຕົ້ນ ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
3. ດຳເນີນການຜະລິດ ບໍ່ຖືກຕ້ອງຕາມການອະນຸຍາດ.

ການໂຈະໃບອະນຸຍາດດຳເນີນການຜະລິດ ແມ່ນເພື່ອໃຫ້ຜູ້ໄດ້ຮັບອະນຸຍາດ ປັບປຸງ ແລະ ແກ້ໄຂ ພາຍໃນກຳນົດເວລາ ເກົ້າສິບວັນ ແລະ ຕ້ອງແຈ້ງໃຫ້ຜູ້ໄດ້ຮັບອະນຸຍາດ ຢ່າງເປັນລາຍລັກອັກສອນ. ໃນກໍລະນີ ຜູ້ໄດ້ຮັບ

ອະນຸຍາດດຳເນີນການຜະລິດ ບໍ່ສາມາດປັບປຸງ ແລະ ແກ້ໄຂ ພາຍໃນເວລາທີ່ກຳນົດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ແກ່ຜູ້ແຈ້ງໂຈະ ຊາບ.

**ມາດຕາ 22 ການຍົກເລີກໃບອະນຸຍາດດຳເນີນການຜະລິດ**

ໃບອະນຸຍາດດຳເນີນການຜະລິດ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ບໍ່ປະຕິບັດຕາມການແຈ້ງໂຈະ ໂດຍບໍ່ມີເຫດຜົນພຽງພໍ;
3. ດຳເນີນການຜະລິດ ຜະລິດຕະພັນສັດຂັ້ນຕົ້ນທີ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ.

**ມາດຕາ 23 ການຂໍໃບອະນຸຍາດດຳເນີນການຜະລິດຄືນໃໝ່**

ກໍລະນີ ໃບອະນຸຍາດດຳເນີນການຜະລິດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງແຈ້ງອົງການທີ່ອອກໃບອະນຸຍາດ ໂດຍໃຫ້ປະກອບເອກະສານຂໍໃບອະນຸຍາດດຳເນີນການຜະລິດ ຄືນໃໝ່.

ອົງການທີ່ອອກໃບອະນຸຍາດດຳເນີນການຜະລິດ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນການຜະລິດຄືນໃໝ່ ພາຍໃນ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ຂໍ້ມູນທີ່ກ່ຽວຂ້ອງ ເປັນຕົ້ນໄປ. ໃນກໍລະນີ ປະຕິເສດການຂໍໃບອະນຸຍາດດຳເນີນການຜະລິດຄືນໃໝ່ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ.

**ມາດຕາ 24 ການຜະລິດ ແລະ ຈຳໜ່າຍ ຜະລິດຕະພັນສັດຂັ້ນຕົ້ນ**

ການຜະລິດ ແລະ ຈຳໜ່າຍ ຜະລິດຕະພັນສັດຂັ້ນຕົ້ນ ຕ້ອງໃຫ້ຖືກຕ້ອງຕາມ ກົດໝາຍ, ລະບຽບການ ແລະ ມາດຕະຖານການຜະລິດທີ່ດີ.

**ມາດຕາ 25 ມາດຕະຖານການປະຕິບັດງານທີ່ດີ ສຳລັບການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ**

ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຕ້ອງປະຕິບັດຕາມມາດຕະຖານການປະຕິບັດງານທີ່ດີ ສຳລັບການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມທັງໃຫ້ສອດຄ່ອງກັບມາດຕະຖານ ຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເປັນຕົ້ນ: ທີ່ຕັ້ງ, ອົງປະກອບ, ອາຄານ, ສະຖານທີ່ຜະລິດ, ສິ່ງອຳນວຍຄວາມສະດວກ, ເຄື່ອງມືອຸປະກອນ, ການຄຸ້ມຄອງການຜະລິດ ແລະ ກວດກາຄຸນນະພາບ, ການເກັບຮັກສາ, ການປະຕິບັດມາດຕະການດ້ານສຸຂານາໄມ, ບຸກຄະລາກອນ ແລະ ການບັນທຶກ.

**ມາດຕາ 26 ການໂຄສະນາຜະລິດຕະພັນສັດຂັ້ນຕົ້ນ**

ການໂຄສະນາຜະລິດຕະພັນສັດຂັ້ນຕົ້ນ ຕ້ອງໃຫ້ຖືກກັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ເນື້ອໃນການໂຄສະນາ ຕ້ອງໃຫ້ຊັດເຈນ, ຖືກຕາມຄຸນລັກສະນະ, ຄຸນນະພາບ ແລະ ຫຼີກລ່ຽງການໂຄສະນາເກີນຄວາມຈິງ ທີ່ເປັນການບິດເບືອນ ຫຼອກລວງຜູ້ອື່ນໃຫ້ຫຼົງເຊື່ອ.

ຜູ້ທີ່ມີຈຸດປະສົງ ໂຄສະນາຜະລິດຕະພັນສັດຂັ້ນຕົ້ນ ຕ້ອງຂໍອະນຸຍາດ ຈາກ ກົມລ້ຽງສັດ ແລະ ການປະມົງ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ.

**ມາດຕາ 27 ການຂໍໃບຢັ້ງຢືນນຳໃຊ້ ກາໝາຍຄຸນນະພາບຜະລິດຕະພັນສັດຂັ້ນຕົ້ນ**

ຜູ້ທີ່ມີຈຸດປະສົງຂໍໃບຢັ້ງຢືນນຳໃຊ້ ກາໝາຍຄຸນນະພາບຜະລິດຕະພັນສັດຂັ້ນຕົ້ນ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຫຼັກຖານ ແລະ ຕົວຢ່າງຜະລິດຕະພັນ ຕໍ່ກົມລ້ຽງສັດ ແລະ ການປະມົງ ຕາມລະບຽບການ.

# ໝວດທີ 4
# ການປ່ຽນແປງກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

**ມາດຕາ 28 ການຂະຫຍາຍໂຮງງານ**

ເຈົ້າຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ສາມາດຂະຫຍາຍໂຮງງານໄດ້ ຊຶ່ງຕ້ອງໄດ້ຮັບການອະນຸມັດຈາກ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ໂດຍໃຫ້ປະກອບເອກະສານ ແລະ ປະຕິບັດຂັ້ນຕອນການຂໍອະນຸມັດໃນສ່ວນທີ່ຈະຂະຫຍາຍ ຕາມລະບຽບການ.

**ມາດຕາ 29 ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ**

ເຈົ້າຂອງໂຮງງານ ທີ່ມີຈຸດປະສົງ ໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານໃຫ້ຜູ້ອື່ນ ຕ້ອງລາຍງານຫາກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ຂັ້ນແຂວງ ຊາບ ຢ່າງໜ້ອຍ ສິບຫ້າວັນ ກ່ອນຈະມອບສິດໃຫ້ຜູ້ຮັບ ຄົນໃໝ່.

ຜູ້ຈະຮັບ ການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການໂຮງງານ ຕ້ອງຍື່ນຄຳຮ້ອງ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງຂັ້ນແຂວງ ໂດຍຕ້ອງດຳເນີນການມອບໂອນ, ເຊົ່າ ຫຼື ຊື້ ໃຫ້ສຳເລັດພາຍໃນ ສາມສິບວັນ ນັບແຕ່ວັນເຊັນສັນຍາ.

**ມາດຕາ 30 ການສືບທອດການດຳເນີນກິດຈະການໂຮງງານ**

ກໍລະນີ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຊາບ ພາຍໃນ ຫົກສິບວັນ ນັບແຕ່ວັນຜູ້ດຳເນີນກິດຈະການໄດ້ເສຍຊີວິດ ເພື່ອປ່ຽນແປງຊື່ ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ໃນກໍລະນີ ບໍ່ມີການສະເໜີຂໍສືບທອດ ພາຍໃນ ເກົ້າສິບວັນ ຖືວ່າໃບອະນຸຍາດດຳເນີນການຜະລິດ ຜະລິດຕະພັນສັດຂັ້ນຕົ້ນ ນັ້ນ ໝົດອາຍຸ.

ການສືບທອດການດຳເນີນກິດຈະການໂຮງງານ ຕ້ອງປະຕິບັດຕາມຂັ້ນຕອນ ການຂໍອະນຸຍາດດຳເນີນກິດຈະການ ຄືນໃໝ່.

**ມາດຕາ 31 ການປ່ຽນຊື່ໂຮງງານ ຫຼື ປ່ຽນເຈົ້າຂອງໂຮງງານ**

ເຈົ້າຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ສາມາດ ປ່ຽນຊື່ໂຮງງານ ຫຼື ປ່ຽນຊື່ເຈົ້າຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນໄດ້ ໂດຍໃຫ້ສະເໜີຕໍ່ ກົມລ້ຽງສັດ ແລະ ການປະມົງ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

# ໝວດທີ 5
# ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

**ມາດຕາ 32 ສິດ ຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ມີ ສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ແລະ ໄດ້ຮັບຜົນປະໂຫຍດຈາກການດຳເນີນການຜະລິດ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອດຳເນີນການຜະລິດ ແລະ ປຸງແຕ່ງ ຜະລິດຕະພັນສັດຂັ້ນຕົ້ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ເຄື່ອນໄຫວດຳເນີນການຜະລິດ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໃນໃບອະນຸຍາດດຳເນີນການຜະລິດ;
4. ສະເໜີຂໍ ນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ ແລະ ການແນະນຳຈາກ ພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
5. ໃຫ້ເຊົ່າ, ໂອນ, ມອບ, ຊື້, ຂາຍ, ຂະຫຍາຍການດຳເນີນການຜະລິດ ແລະ ປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ແລະ ຢຸດເຊົາ ກິດຈະການໂຮງງານ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ມີ ພັນທະ ດັ່ງນີ້:

1. ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຕາມການອະນຸຍາດ;
2. ປະຕິບັດມາດຕະຖານເຕັກນິກ ກ່ຽວກັບ ການຄຸ້ມຄອງການຜະລິດ ແລະ ຄວບຄຸມຄຸນນະພາບ ຕາມມາດຕະຖານຂອງສາກົນ;
3. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງ;
4. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນການໃຫ້ເງິນເດືອນ, ສະຫວັດດີການ ແລະ ການອຸດໜູນອື່ນໆ;
5. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ເປັນຕົ້ນ ການປະຖົມພະຍາບານ, ການຈັດການດ້ານສິ່ງແວດລ້ອມ, ການກຳຈັດເຄມີທີ່ເປັນອັນຕະລາຍ ແລະ ການປ້ອງກັນອຸບປະຕິເຫດ ຕາມລະບຽບການທີ່ກ່ຽວຂ້ອງກຳນົດ;
6. ລາຍງານ ການເກີດອຸບປະຕິເຫດຂັ້ນຮ້າຍແຮງພາຍໃນໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃຫ້ອົງການທີ່ກ່ຽວຂ້ອງ;
7. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
8. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບ ການເຄື່ອນໄຫວໂຮງງານຂອງຕົນ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;
9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການປະຕິບັດໜ້າທີ່ຕາມ ສິດ ແລະ ຄວາມຮັບຜິດຊອບ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມ ສຳລັບຜູ້ດຳເນີນກິດຈະການ**

ຫ້າມ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ມີພຶດຕິກຳ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຜະລິດ ຜະລິດຕະພັນສັດຂັ້ນຕົ້ນ ທີ່ຖືກ ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນການຜະລິດ;
3. ນຳໃຊ້ສານທີ່ເປັນອັນຕະລາຍ ຫຼື ສານທີ່ຕ້ອງຫ້າມ ປະສົມລົງໃນການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
4. ນຳໃຊ້ພາຊະນະບັນຈຸ ທີ່ບໍ່ເໝາະສົມ ສຳລັບການບັນຈຸ ຫຼື ຫຸ້ມຫໍ່ຜະລິດຕະພັນ ແລະ ຕິດສະຫຼາກ ທີ່ບໍ່ຖືກຕ້ອງ;

5. ປະຕິເສດຄວາມຮັບຜິດຊອບ, ຫຼົບຫຼີກ, ບິດເບືອນ, ຂັດຂວາງ, ເຊື່ອງອຳ ການກວດກາ ຫຼື ບໍ່ປະຕິບັດ ຕາມຄຳສັ່ງ ຂອງ ເຈົ້າໜ້າທີ່ ແລະ ຄະນະວິຊາການກວດກາ;
6. ໃຫ້ສິນບົນແກ່ພະນັກງານ ຫຼື ຮ່ວມກັນສໍ້ໂກງ ລັດ ແລະ ຜູ້ນຳໃຊ້ ຜະລິດຕະພັນສັດຂັ້ນຕົ້ນ;
7. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
8. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
9. ປ່ອຍ ຫຼື ຖິ້ມ ສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ອອກສູ່ສະພາບແວດລ້ອມ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 35 ຂໍ້ຫ້າມ ສຳລັບພະນັກງານ - ລັດຖະກອນ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ກ່ຽວກັບ ການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້ ຫຼື/ແລະ ເມີນເສີຍ ແລະ ຂາດຄວາມຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ຮຽກເອົາ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ບິດເບືອນຄວາມຈິງ, ປົດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ

**ມາດຕາ 36 ອົງການຄຸ້ມຄອງ ແລະ ກວດກາ ໂຮງງານ**

ອົງການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຊຶ່ງປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍ ແມ່ນກົມລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ ໂດຍ ແມ່ນຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍແມ່ນ ໜ່ວຍງານລ້ຽງສັດ ແລະ ການປະມົງຂັ້ນເມືອງ ເປັນເສນາທິການ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງກົມລ້ຽງສັດ ແລະ ການປະມົງ**

ກົມລ້ຽງສັດ ແລະ ການປະມົງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງລະບຽບການ ກ່ຽວກັບ ການຄຸ້ມຄອງການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
2. ສະເໜີ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ປະເພດ 1;

3. ຕິດຕາມ ແລະ ກວດກາ ການດຳເນີນການຜະລິດຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
4. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບ ຜະລິດຕະພັນສັດຂັ້ນຕົ້ນ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ**

ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
2. ສະເໜີ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ປະເພດ 2;
3. ຕິດຕາມ ແລະ ກວດກາ ການດຳເນີນການຜະລິດຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບ ຜະລິດຕະພັນສັດຂັ້ນຕົ້ນ ຢູ່ໃນແຂວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃຫ້ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງໜ່ວຍງານລ້ຽງສັດ ແລະ ການປະມົງຂັ້ນເມືອງ**

ໜ່ວຍງານລ້ຽງສັດ ແລະ ການປະມົງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ບັນດາລະບຽບການກ່ຽວກັບ ການຄຸ້ມຄອງການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;
2. ຕິດຕາມ ແລະ ກວດກາ ການດຳເນີນການຜະລິດຂອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ຕາມການມອບໝາຍ;
3. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບ ຜະລິດຕະພັນສັດຂັ້ນຕົ້ນ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ການກວດກາ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ**

ການກວດກາ ໂຮງງານປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ໃຫ້ປະຕິບັດຕາມ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ຕາມເນື້ອໃນ ແລະ ຮູບການກວດກາ ທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍການຂ້າສັດ ແລະ ກວດກາອະນາໄມຊີ້ນ ສະບັບເລກທີ 516/ລບ, ລົງວັນທີ 23 ກັນຍາ 2020.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ໃຫ້ ກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ